ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0854 /ທຄຕລ .2023........
ນະຄອນຫຼວງວຽງຈັນ, ວັນທີ: ....02 MAR 2023..........

**ຮຽນ:** ບັນດາທ່ານ ລູກຄ້າ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ ນັບຖືຢ່າງສູງ,

**ເລື່ອງ:** ການຈຳໜ່າຍພັນທະບັດຂອງ ທະນາຄານ ແຫ່ງ ສປປ ລາວ ສະກຸນເງິນກີບ ຢູ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນວັນທີ 28 ກຸມພາ 2023

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຮັບການຄັດເລືອກໃຫ້ເປັນໜຶ່ງໃນບັນດາຕົວແທນຈຳໜ່າຍພັນທະບັດ ຂອງ ທະນາຄານ ແຫ່ງ ສປປ ລາວ (ທຫລ) ໃນຄັ້ງນີ້. ຜ່ານການຈຳໜ່າຍຕົວຈິງເຫັນວ່າ ພັນທະບັດ ທຫລ ໄດ້ຮັບຄວາມເຊື່ອໝັ້ນຈາກມວນຊົນເພີ່ມຂຶ້ນ ເຮັດໃຫ້ການຈຳໜ່າຍໃນຄັ້ງນີ້ ປະສົບຜົນສຳເລັດຕາມລະດັບຄາດໝາຍ. ເຖິງຢ່າງໃດກໍ່ຕາມ, ການຈຳໜ່າຍພັນທະບັດໃນຄັ້ງນີ້ ມີລູກຄ້າບາງທ່ານບໍ່ສາມາດຊື້ໄດ້ຕາມຄວາມຕ້ອງການຂອງລູກຄ້າ ຍ້ອນບາງເຫດຜົນຕົ້ນຕໍດັ່ງນີ້:

1. ຄວາມຕ້ອງການຊື້ພັນທະບັດ ທຫລ ຂອງລູກຄ້າ ມີຈຳນວນຫຼວງຫລາຍ ເມື່ອທຽບໃສ່ຈຳນວນພັນທະບັດທີ່ ອອກຈຳໜ່າຍ;
2. ການຈຳໜ່າຍພັນທະບັດ, ທຄຕລ ໄດ້ນຳໃຊ້ຮູບແບບການຈຳໜ່າຍ ແບບລວມສູນໃນລະບົບສ່ວນກາງ ແລະ ຕັດຍອດພ້ອມກັນທັນທີທົ່ວລະບົບ ໃນຈຳນວນ 256 ປ່ອງບໍລິການ ເຊິ່ງປະກອບມີ 01 ສຳນັກງານໃຫຍ່, 20 ສາຂາ ແລະ 97 ໜ່ວຍບໍລິການ ໃນຂອບເຂດທົ່ວປະເທດ ເຮັດໃຫ້ການຈຳໜ່າຍພັນທະບັດ ທຫລ ໃນຄັ້ງນີ້ ສຳເລັດໃນເວລາອັນສັ້ນ.

ສຳລັບລູກຄ້າ ທີ່ບໍ່ສາມາດຊື້ພັນທະບັດ ທຫລ ໃນຄັ້ງນີ້, ທຄຕລ ຕ້ອງຂໍອະໄພເປັນຢ່າງສູງມາ ນະທີ່ນີ້ດ້ວຍ. ພ້ອມດຽວກັນນັ້ນ ທຄຕລ ຈະນຳເອົາບົດຮຽນໃນຄັ້ງນີ້ໄປປັບປຸງ ແລະ ແກ້ໄຂ ໃຫ້ດີຂຶ້ນຕື່ມເພື່ອສ້າງຄວາມປະທັບໃຈໃຫ້ລູກຄ້າ ໃນຕໍ່ໜ້າ.

ທ້າຍສຸດນີ້, ທຄຕລ ຂໍໃຫ້ລູກຄ້າ ກໍ່ຄືສັງຄົມ ສືບຕໍ່ໃຫ້ຄວາມເຊື່ອໝັ້ນ ແລະ ໄວ້ວາງໃຈຕໍ່ການບໍລິການຂອງ ທຄຕລ ແລະ ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ຕໍ່ລູກຄ້າ ແລະ ສັງຄົມ ທີ່ໃຫ້ການຊຸກຍູ້ ສະໜັບສະໜູນ ການບໍລິການຕ່າງໆຂອງ ທຄຕລ ດ້ວຍດີຕະຫຼອດມາ.

**ຣ. ຜູ້ອຳນວຍການ**

ທະນາຄານ ແຫ່ງ ສປປ ລາວ
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ນະຄອນຫຼວງວຽງຈັນ

**ວຽງສຸກ ຈຸນທະວົງ**

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA